ຈຳປາແດງຂໍສັລເສີນການຂຽນກອນ "ສາຍນ້ຳຂອງຄືສາຍໃຈແມ່" ຂອງສາວຫຼັກເຈັດ ດ້ວຍຄວາມຈິງໃຈ... ຄຶດເຫັນໂຮງຂ້າສັດ (ອາປາຕົວຣ໌) ຢູ່ສວັນນະເຂດແລ້ວ ກໍ ຫນ້າເປັນຫ່ວງຄວາມສວຍງາມຂອງແມ່ນ້ຳຂອງ... ແຕ່ກ່ອນກອງກະດູກສັດແມ່ນ ເພີ່ນຖິ້ມລົງຕະຝັ່ງຂອງຈົນລົງມາຮອດນ້ຳພຸ້ນລະ... ແລ່ນເຮືອກາຍໄປ ກໍຕ້ອງໄດ້ອັດ ປາກອັດດັງ ເພາະຄວາມເຫມັນສະເອືອນຂອງສິ່ງໂສໂຄກເລົ່ານັ້ນ....

ຂຽນຄຳກອນໄດ້ຊາບຊຶ້ງ          ສົມເປັນຫນຶ່ງແດນກະວີ
ສາວຜູ້ດີແດນຫຼັກເຈັດ          ເດັດດັງຄຳຄົນຍ້ອງ
ເຣື່ອງສາຍຂອງສາຍນ້ຳ          ລຳທານສາຍເລືອດແມ່
ຂໍຍົກໂປ້ໃຫ້ນ້ອງແທ້          ຄະແນນຮ້ອຍ ກ້ອຍຕື່ມນຳ

ແມ່ຂອງຄືແມ່ນ້ຳ          ຄວນເຄົາຣົບບູຊາ    ຈິງແລ້ວ
ປວງປະຊາຊົນລາວ          ໄດ້ເພິ່ງພາອາສັຍເຈົ້າ
ພວກເຮົາຄວນນັບຖືໄຫວ້          ໃນຫົວໃຈເຫມືອນກັບແມ່
ຄວນຫມັ່ນພຽນດູແລ  ຢ່າໃຫ້ແປະຫມົ່ນເປື້ອນ     ຄາວເຄື້ອນຄາບບໍ່ດີ

ສາວຫຼັກເຈັດເອີຍ.. ຂໍໃຫ້ກອນເຈົ້ານີ້     ດັງໄປທົ່ວປວງຊົນລາວ  ແມ່ແມ໋
ເອົາໄປເປັນບົດຮຽນ          ພາກພຽນສຶກສາໄວ້
ໃຫ້ຫມູ່ຫຼານເຫຼັນຫຼອນ          ອອນຊອນໃຈເຜື່ອແຜ່
ສາຍນ້ຳຂອງສາຍໃຈແມ່    ບໍ່ເຄີຍແປປ່ຽນໄດ້   ຮັກສາໄວ້ເພື່ອຕອບແທນ

ຄຳກອນນາງຂຽນໄດ້ແຫນ້ນ          ພໍຢາກແລ່ນຕິດຕາມ ເບິ່ງເດ
ຝາກຈຳນຳຫົວໃຈ          ວ່າຈັ່ງໃດມີທາງບໍ?
ຂໍອາສາເປັນຄົນໃຊ້          ຍອມມອບກາຍ ເປັນທາສ
ຍິງສລາດຄືຈັ່ງນ້ອງ          ຮັບຮອງອ້າຍ ສູ້ບໍ່ຖອຍ

ຂຽນກາບກອນໄດ້ອ່ອນຊ້ອຍ          ອ້ອຍອິ່ນຈົນຫນາວເຫນັບ
ເກັບສຳດັບສຳນວນ          ຊ່າງມ່ວນຍິນ ສິລປ໌ພ້ອມ
ອ້າຍຂໍຍອມຖືເຈົ້າ          ເອົາເປັນຄຣູສອນສັ່ງ

*ສາວຫຼັກເຈັດມານັ່ງ　　　ສອນຂຽນກອນຢູ່ຂ້າງໆ ມີຫວັງໄດ້ເດັ່ນເຮື່ອງກອນ*

*ໃສ່ຂໍ້ຄວາມໄດ້ຄົບຖ້ວນ　　　ຟັງແລ້ວມ່ວນນອນໃຈ　ເດນໍ*
*ບັລຍາຍຄົມຄາຍ　　　ໄດ້ແກ່ນສານເຫັນແຈ້ງ*
*ຈຳປາແດງຊຶມເຊີຍຍ້ອງ　　　ສາຍນ້ຳຂອງ ຂຽນໄດ້ເດັ່ນ*
*ວາບພາບໄປກໍຍັງເຫັນ　ສາວຫຼັກເຈັດລົງເຫຼັ້ນນ້ຳ ປາກດຳພື້ນມຸດຈ່ອງຂາ....*

*ຣະວັງແຂ້ຈຳປາແດງຈ່ອງຂາເດີບໍ່ແມ່ນແຂ້ຊາຣະວັນໃດ໋....*